# ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຢູ່ ສປປ ລາວ
# Economic Disputes Resolution in Lao PDR

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 1
## ຄວາມຮູ້ທົ່ວໄປກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຢູ່ ສປປ ລາວ
## General knowledge in resolving economic disputes in Lao PDR

### I .ປະຫວັດຄວາມເປັນມາກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງ ສປປ ລາວ

### 1.1. ສະພາບລວມກ່ອນການສ້າງຕັ້ງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ໃນ ປີ 1986 ລັດຖະບານແຫ່ງ ສ ປ ປ ລາວ ໄດ້ມີການປັບປຸງ ແລະ ຫັນປ່ຽນກົນໄກການຄຸ້ມຄອງທີ່ມີລັກສະນະແບບລວມສູນ ແລະ ບໍລິຫານເກື້ອກູນມາເປັນການຄຸ້ມຄອງດ້ວຍການສົ່ງເສີມໃຫ້ມີເສດຖະກິດຫຼາຍພາກສ່ວນ ທີ່ສາມາດເຄື່ອນໄຫວຕາມກົນໄກເສດຖະກິດຕະຫຼາດ ໂດຍມີການຄຸ້ມຄອງ ແລະ ດັດສົມຂອງລັດ, ຫັນປ່ຽນຈາກເສດຖະກິດທຳມະຊາດ ມາເປັນການຜະລິດເປັນສິນຄ້າ,ປັບປຸງນະໂຍບາຍສົ່ງເສີມການລົງທຶນທັງພາຍໃນ ແລະ ຕ່າງປະເທດແນໃສ່ດຶງດູດນັກລົງທຶນຈາກຕ່າງປະເທດເຂົ້າມາລົງທຶນໃນ ສປປ ລາວ ເພື່ອເປັນການພັດທະນາເສດຖະກິດແຫ່ງຊາດ ດ້ວຍການນຳເອົາເຕັກໂນໂລຊີ, ເຕັກນິກວິທະຍາສາດ ແລະ ບົດຮຽນໃໝ່ໆເຂົ້າມາພັດທະນາຂະແໜງກະສິກຳ ແລະ ອຸດສາຫະກຳ ໃຫ້ທັນສະໄໝເທື່ອລະກ້າວ. ພ້ອມກັບການປັບປຸງ ແລະ ຫັນປ່ຽນກົນໄກການຄຸ້ມຄອງ, ລັດຖະບານແຫ່ງ ສປປ ລາວ ຈຶ່ງໄດ້ປະກາດໃຊ້ລັດຖະທຳມະນູນ, ກົດໝາຍ ແລະ ອອກລະບຽບການ ເພື່ອຮອງຮັບໃຫ້ແກ່ການລົງທຶນ.

ຈາກການຫັນປ່ຽນກົນໄກຄຸ້ມຄອງເສດຖະກິດທຳມະຊາດ ໄປສູ່ກົນໄກເສດຖະກິດຕະຫຼາດ ໂດຍເລີ່ມນຳໃຊ້ກົນໄກເສດຖະກິດແບບໃໝ່ (New Economic Mechanism ) ໃນປີ 1986 ນັ້ນ ຈຶ່ງເຮັດໃຫ້ລະບົບເສດຖະກິດຂອງ ສປປ ລາວ ໄດ້ມີການຂະຫຍາຍຕົວຢ່າງວ່ອງໄວ ແລະ ມີການເປີດກ້ວາງພົວພັນຮ່ວມມືກັບຕ່າງປະເທດຫຼາຍຂຶ້ນເປັນກ້າວໆ. ການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ ຈຶ່ງມີຄວາມຈຳເປັນພາວະວິໄສ ສຳລັບ ສປປ ລາວ. ຈາກນີ້ ສປປ ລາວ ຈຶ່ງໄດ້ມີການຮັບຮອງກົດໝາຍຫຼາຍສະບັບ ແລະ ມີການປັບປຸງໃຫ້ສອດຄ່ອງກັບຄວາມເປັນຈິງພາຍໃນປະເທດ, ພາກພື້ນ ແລະ ສາກົນ.

### 1.2.ການສ້າງຕັ້ງ ແລະ ການພັດທະນາ ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ພາຍຫຼັງ ສປປລາວ ໄດ້ປະຕິບັດນະໂຍບາຍນຳໃຊ້ກົນໄກເສດຖະກິດຕະຫຼາດ ແຕ່ປີ 1986 ເປັນຕົ້ນມາ ການລົງທຶນພາຍໃນ ແລະ ຕ່າງປະເທດໄດ້ມີການຂະຫຍາຍຕົວ, ຫົວໜ່ວຍວິສາຫະກິດເອກະຊົນ ກໍໄດ້ຮັບການສ້າງຕັ້ງຂຶ້ນເປັນຈຳນວນຫຼວງຫຼາຍ ແລະ ມີການຂະຫຍາຍຕົວຢ່າງໄວວາ, ຄຽງຄູ່ກັນນັ້ນ ກໍມີຂໍ້ຂັດແຍ່ງທາງດ້ານເສດຖະກິດເກີດຂຶ້ນ ຊຶ່ງຮຽກຮ້ອງໃຫ້ມີອົງການຮັບຜິດຊອບ ແກ້ໄຂຂໍ້ຂັດແຍ່ງດັ່ງກ່າວສະເພາະຕາມໄລຍະຂອງການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ. ດັ່ງນັ້ນ, ລັດຖະບານແຫ່ງ ສປປ ລາວ ຈຶ່ງໄດ້ສ້າງອົງການທີ່ມີພາລະບົດບາດແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນ ໂດຍຜ່ານແຕ່ລະໄລຍະຂອງການພັດທະນາ ດັ່ງນີ້:

**1.2.1. ໄລຍະທີ 1 ແຕ່ປີ 1989ຫາ 1994**

ໃນທ້າຍປີ 1989 ສປປ ລາວ ໄດ້ສ້າງຕັ້ງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂຶ້ນ ໂດຍໃສ່ຊື່ວ່າ "ອົງການໄກ່ເກ່ຍເສດຖະກິດ"[1]. ໃນໄລຍະນີ້ ອົງການດັ່ງກ່າວມີແຕ່ຢູ່ຂັ້ນສູນກາງມີຖານະທຽບເທົ່າກົມ ທີ່ຂຶ້ນກັບການຄຸ້ມຄອງຂອງກະຊວງເສດຖະກິດ, ແຜນການ ແລະ ການເງິນ, ມີພາລະບົດບາດເປັນເສນາທິການໃຫ້ກະຊວງໃນການແນະນຳຫືວໜ່ວຍການຜະລິດ ແລະ ທຸລະກິດ ກ່ຽວກັບການສ້າງ ແລະ ຄຸ້ມຄອງການປະຕິບັດສັນຍາທາງດ້ານທຸລະກິດ, ສ່ວນຂອບເຂດຄວາມຮັບຜິດຊອບ, ສິດ ແລະ ໜ້າທີ່ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດນັ້ນຍັງບໍ່ທັນໄດ້ມີຂໍ້ກຳນົດຢ່າງລະອຽດ.

**1.2.2. ໄລຍະທີ 2 ແຕ່ປີ 1994ຫາ 2005**

ໄລຍະນີ້ການລົງທຶນທັງພາຍໃນ ແລະ ຕ່າງປະເທດມີການຂະຫຍາຍຕົວ ແລະ ເພີ່ມຂຶ້ນ ຊຶ່ງຮຽກຮ້ອງໃຫ້ອົງການໄກ່ເກ່ຍເສດຖະກິດມີຂອບເຂດຄວາມຮັບຜິດຊອບ, ສິດ ແລະ ໜ້າທີ່ຈະແຈ້ງ ແລະ ສອດຄ່ອງກັບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ. ປີ 1994 ມີນິຕິກຳວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເປັນນິຕິກຳພື້ນຖານສຳລັບການຫັນປ່ຽນລະບົບການຈັດຕັ້ງຂອງອົງການໄກ່ເກ່ຍເສດຖະກິດ ມາເປັນສຳນັກງານແກ້ໄຂຂໍ້ຂັດແກ້ທາງດ້ານເສດຖະກິດ ແລະ ຍົກຍ້າຍອົງການດັ່ງກ່າວມາ ຂຶ້ນກັບການຄຸ້ມຄອງຂອງຂະແໜງຍຸຕິທຳ ຊຶ່ງປະກອບມີ 2 ຂັ້ນຄື: ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ[2].

ຂັ້ນສູນກາງ ມີສຳນັກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເອີ້ນຫຍໍ້ວ່າ: "**ສກສ**" ມີຖານະທຽບເທົ່າກັບກົມ ຂຶ້ນກັບກະຊວງຍຸຕິທຳ, ປະກອບມີ 3 ພະແນກຄື: ພະແນກຄຸ້ມຄອງ-ບໍລິຫານ, ພະແນກຄຸ້ມຄອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ພະແນກກົດໝາຍ.

ຂັ້ນທ້ອງຖິ່ນ ມີສາຂາສຳນັກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດເອີ້ນຫຍໍ້ວ່າ:"**ສາຂາ ສກສ**" ຊຶ່ງຫົວໜ້າມີຖານະທຽບເທົ່າກັບຮອງຫົວໜ້າພະແນກຂອງແຂວງ ແລະ ຂຶ້ນກັບພະແນກຍຸຕິທຳແຂວງປະກອບມີ 02 ໜ່ວຍງານຄື: ໜ່ວຍງານຄຸ້ມຄອງ-ບໍລິຫານ ແລະ ໜ່ວຍງານຄຸ້ມຄອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ສາຂາ ສກສ ມີງົບປະມານຂອງຕົນເອງ ບໍ່ຂຶ້ນກັບພະແນກຍຸຕິທຳແຂວງ.ທົ່ວປະເທດມີ 04 ສາຂາ ສກສ ຄື: ສາຂາພາກກາງ ຕັ້ງຢູ່ແຂວງສະຫວັນນະເຂດ ຊຶ່ງໄດ້ສ້າງຂຶ້ນໃນວັນທີ17 ກໍລະກົດ 1997, ພາກເໜືອ ຕັ້ງຢູ່ແຂວງຫຼວງພະບາງ ຊຶ່ງໄດ້ສ້າງຕັ້ງຂຶ້ນໃນວັນທີ30 ພະຈິກ 1997 ແລະ ຕັ້ງຢູ່ ແຂວງ ອຸດົມໄຊ ຊຶ່ງໄດ້ສ້າງຂຶ້ນໃນວັນທີ04 ສິງຫາ 2003 ແລະ ສາຂາພາກໃຕ້ຕັ້ງຢູ່ແຂວງ ຈຳປາສັກ ຊຶ່ງໄດ້ສ້າງຕັ້ງຂຶ້ນໃນວັນທີ01 ພະຈິກ 2004.

**1.2.3. ໄລຍະທີ 03 ແຕ່ປີ 2005ຫາ 2010**

ໃນໄລຍະນີ້ ການພັດທະນາເສດຖະກິດ-ສັງຄົມ ມີການຂະຫຍາຍຕົວ ແລະ ສປປ ລາວ ກໍໄດ້ເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນ ເປັນຕົ້ນ ການເຂົ້າເປັນສະມາຊິກອາຊຽນ, ເຈລະຈາເຂົ້າເປັນສະມາຊິກອົງການ-ການຄ້າໂລກ,ເຂົ້າຮ່ວມເປັນພາຄີຂອງສົນທິສັນຍາ ແລະ ສັນຍາສາກົນ. ສະນັ້ນ, ເມື່ອ ສປປ ລາວ ເຫັນວ່າ ການພັດທະນາເສດຖະກິດ-ສັງຄົມ ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ບາງເນື້ອໃນຂອງດຳລັດ ສະບັບເລກທີ່106/ນຍ, ລົງວັນທີ15 ກໍລະກົດ 1994 ວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານດເສດຖະກິດ ທີ່ເປັນບ່ອນອີງໃນການແກ້ໄຂຂໍ້ຂັດແຍ່ງ ທີ່ເກີດຂຶ້ນຍັງມີຫຼາຍບັນຫາບໍ່ລະອຽດ, ບາງບັນຫາກໍຍັງບໍ່ໄດ້ກຳນົດ. ຈາກເຫດຜົນດັ່ງກ່າວ ກະຊວງຍຸຕິທຳຈຶ່ງ

---

[1] ດຳລັດຂອງປະທານສະພາລັດຖະມົນຕີ ສະບັບເລກທີ່146/ສປລ,ລົງວັນທີ 28 ທັນວາ 1989 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງເສດຖະກິດ, ແຜນການ ແລະ ການເງິນ.

[2] ອອກດຳລັດຂອງນາຍົກລັດຖະມົນຕີ, ສະບັບເລກທີ່106/ນຍ, ລົງວັນທີ15 ກໍລະກົດ 1994.

ໄດ້ສົມທົບກັບຂະແໜງການຕ່າງໆທີ່ກ່ຽວຂ້ອງຕົກລົງເປັນເອກະພາບກັນທັນດໍາລັດສະບັບດັ່ງກ່າວມາເປັນກົດໝາຍ ຊຶ່ງເອີ້ນວ່າ ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບເລກທີ່02/ສພຊ, ລົງວັນທີ19 ພຶດສະພາ 2005 ເພື່ອເປັນພື້ນຖານໃຫ້ແກ່ການປັບປຸງລະບົບການຈັດຕັ້ງ ແລະ ການເຄື່ອນໄຫວແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຊຶ່ງຂັ້ນສູນກາງບໍ່ມີການປ່ຽນແປງ, ສ່ວນຢູ່ຂັ້ນທ້ອງຖິ່ນມີການປ່ຽນແປງໄປຕາມເນື້ອໃນຂອງກົດໝາຍ ໂດຍໄດ້ປ່ຽນຊື່ຈາກສາຂາ ສກສ ມາເປັນຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດເອີ້ນວ່າ "**ຫສກ**".

### 1.2.4. ໄລຍະທີ 4 ແຕ່ປີ 2010 ຫາ 2018

ໃນໄລຍະນີ້ ການຮ່ວມມືການດໍາເນີນທຸລະກິດ, ການຜະລິດ, ການຄ້າ ໃນລະດັບພາກພື້ນ ແລະ ສາກົນໄດ້ມີການຂະຫຍາຍຕົວ. ສະນັ້ນ, ມີບາງເນື້ອໃນຂອງກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດສະບັບປີ 2005ບໍ່ສອດຄ່ອງກັບການຂະຫຍາຍຕົວດັ່ງກ່າວ ຈຶ່ງໄດ້ປັບປຸງກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມາເປັນສະບັບເລກທີ່06/ສພຊ, ລົງວັນທີ17 ທັນວາ 2010 ຊຶ່ງລະບົບການຈັດຕັ້ງຂອງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໄດ້ເຄື່ອນໄຫວວຽກງານຕາມກົດໝາຍສະບັບປັບປຸງດັ່ງກ່າວ ຊຶ່ງຢູ່ຂັ້ນສູນກາງມີການປ່ຽນຊື່ຈາກ "ສໍານັກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ" ມາເປັນ"**ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**" ເອີ້ນຫຍໍ້ວ່າ: "**ສກສ**", ປ່ຽນຊື່ "**ພະແນກກົດໝາຍ**"ມາເປັນ "**ພະແນກນິຕິກໍາ**" ແລະ ສ້າງຕັ້ງຂຶ້ນໃໝ່ 01 ພະແນກ ຄື: ພະແນກຕິດຕາມການປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ. ສໍາລັບຢູ່ທ້ອງຖິ່ນ ບໍ່ມີການປ່ຽນແປງ.

### 1.2.5. ໄລຍະທີ 5 ແຕ່ ປີ 2019 ເຖິງປັດຈຸບັນ

ໃນປັດຈຸບັນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໄດ້ນໍາໃຊ້ສອງຮູບການ ຄື: ການໄກ່ເກ່ຍ ແລະ ການຕັດສິນ, ແຕ່ການແກ້ໄຂຈະນໍາໃຊ້ຮູບການໃດນັ້ນ ແມ່ນຂຶ້ນກັບສັນຍາການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຫຼື ການຕົກລົງດ້ວຍຄວາມສະໝັກໃຈໃນການເລືອກຂອງຄູ່ກໍລະນີ.

ໃນປັດຈຸບັນອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີທັງໝົດ 15 ແຫ່ງ, ໃນນີ້ມີສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂັ້ນສູນກາງ 1 ແຫ່ງ ແລະ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂັ້ນທ້ອງຖິ່ນ 14 ແຫ່ງ ຄື: ນະຄອນຫຼວງວຽງຈັນ, ແຂວງ ຜົ້ງສາລີ, ອຸດົມໄຊ, ຫຼວງນໍ້າທາ, ບໍ່ແກ້ວ, ຫົວພັນ, ຫຼວງພະບາງ, ໄຊຍະບູລີ, ຊຽງຂວາງ, ວຽງຈັນ, ຄໍາມ່ວນ, ສະຫວັນນະເຂດ, ຈໍາປາສັກ ແລະ ສາລະວັນ.

ຜ່ານການດໍາເນີນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສາມາດສະຫຼຸບສະຖິຕິຂໍ້ຂັດແຍ່ງທາງດ້ານເສດຖະກິດດັ່ງລຸ່ມນີ້:

**ຕາຕະລາງສະຖິຕິການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງ ສກສ**

| ລ/ດ | ຂໍ້ຂັດແຍ່ງ | | ປີ | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|
| | | | 2010 | 2011 | 2012 | 2013 | 2014 | 2015 | 2016 | 2017 | 2018 | 2019 | 2020 |
| 1 | ຂໍ້ຂັດແຍ່ງທີ່ໄດ້ຂຶ້ນສໍານວນ | ຂໍ້ຂັດແຍ່ງທັງໝົດ | 24 | 35 | 28 | 15 | 20 | 36 | 34 | 69 | 56 | 46 | 31 |
| | | ພາຍໃນກັບພາຍໃນ | 12 | 16 | 9 | 6 | 10 | 16 | 22 | 16 | 8 | 11 | 15 |
| | | ພາຍໃນກັບຕ່າງປະເທດ | 12 | 19 | 17 | 8 | 9 | 19 | 10 | 13 | 17 | 12 | 16 |
| | | ຕ່າງປະເທດກັບຕ່າງປະເທດ | 0 | 0 | 2 | 1 | 1 | 3 | 2 | 0 | 2 | 0 | 0 |
| 2 | ຂໍ້ຂັດແຍ່ງທີ່ແກ້ໄຂສໍາເລັດ | ແກ້ໄຂໄດ້ | 4 | 6 | 9 | 10 | 10 | 20 | 17 | 18 | 22 | 19 | 27 |
| | | ພາຍໃນກັບພາຍໃນ | 2 | 3 | 2 | 4 | 5 | 8 | 14 | 9 | 5 | 9 | 13 |
| | | ພາຍໃນກັບຕ່າງປະເທດ | 2 | 3 | 6 | 5 | 4 | 12 | 3 | 9 | 15 | 10 | 14 |
| | | ຕ່າງປະເທດກັບຕ່າງປະເທດ | 0 | 0 | 1 | 1 | 1 | 0 | 0 | 0 | 2 | 0 | 0 |
| 3 | ຂໍ້ຂັດແຍ່ງທີ່ສົ່ງຄືນໃຫ້ຄູ່ກໍລະນີ ຫຼືໄປສານ | ສົ່ງຄືນຄູ່ກໍລະນີຫຼືສົ່ງໄປສານ | 9 | 16 | 15 | 2 | 4 | 4 | 6 | 7 | 3 | 1 | 1 |
| | | ພາຍໃນກັບພາຍໃນ | 2 | 8 | 6 | 1 | 3 | 1 | 1 | 5 | 1 | 1 | 0 |
| | | ພາຍໃນກັບຕ່າງປະເທດ | 7 | 8 | 8 | 1 | 1 | 2 | 3 | 2 | 2 | 0 | 1 |
| | | ຕ່າງປະເທດກັບຕ່າງປະເທດ | 0 | 0 | 1 | 0 | 0 | 1 | 2 | 0 | 0 | 0 | 0 |
| 4 | | ຄ້າງມາແຕ່ປີກ່ອນ | 0 | 8 | 12 | 4 | 3 | 6 | 12 | 11 | 4 | 3 | 4 |
| ໝາຍເຫດ: ສະຖິຕິປີ 2010-2020 | | | | | | | | | | | | | |

## II .ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

### 2.1.ຄວາມໝາຍ

ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດແມ່ນການແກ້ໄຂຂໍ້ພິພາດທາງດ້ານຜົນປະໂຫຍດດ້ວຍການໄກ່ເກ່ຍຫຼືການຕັດສິນຊຶ່ງດຳເນີນໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ. ໝາຍຄວາມວ່າ ແມ່ນການແກ້ໄຂບັນຫາທີ່ບໍ່ຖືກຕ້ອງປອງດອງກັນ,ຂັດແຍ່ງກັນທາງດ້ານສິດແລະຜົນປະໂຫຍດຂອງຄູ່ກໍລະນີທີ່ເກີດຂຶ້ນຈາກການລະເມີດສັນຍາທາງດ້ານເສດຖະກິດ,ການ ດຳເນີນທຸລະກິດ ເປັນຕົ້ນ ການຄ້າ, ການລົງທຶນ, ການບໍລິການ ແລະ ອື່ນໆ ທີ່ກໍ່ໃຫ້ເກີດມີຄວາມເສຍຫາຍ ຊຶ່ງອາດພາໃຫ້ມີການຮ້ອງຂໍ ເພື່ອໃຫ້ມີການພິຈາລະນາແກ້ໄຂດ້ວຍຮູບການໄກ່ເກ່ຍຫຼືຮູບການຕັດສິນບົນພື້ນຖານຄວາມສະໝັກໃຈຂອງຄູ່ກໍລະນີ ຊຶ່ງອາດສະແດງອອກໃນຂໍ້ກຳນົດທີ່ຄູ່ກໍລະນີໄດ້ຕົກລົງກັນໄວ້ໃນສັນຍາ ຫຼື ພາຍຫຼັງຂໍ້ຂັດແຍ່ງເກີດຂຶ້ນແລ້ວ

ຄູ່ກໍລະນີ ສະໝັກໃຈໃຫ້ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພິຈາລະນາແກ້ໄຂ.

ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດແມ່ນທາງເລືອກໜຶ່ງຂອງຄູ່ກໍລະນີ ທີ່ດຳເນີນການແກ້ໄຂນອກລະບົບສານ ມີລັກສະນະວິຊາຊີບສະເພາະດ້ານ ຊຶ່ງຜົນຂອງການແກ້ໄຂສາມາດນຳໄປຈັດຕັ້ງປະຕິບັດຢູ່ລັດພາຄີຂອງສົນທິສັນຍາ ນິວຢອກ 1958 ວ່າດ້ວຍການຮັບຮູ້ ແລະ ການບັງຄັບປະຕິບັດຄຳຕັດສິນຂອງຄະນະກຳມະການຕ່າງປະເທດ ແລະ ສົນທິສັນຍາສິງກະໂປ 2019 ວ່າດ້ວຍການໄກ່ເກ່ຍ.

### 2.2.ຄວາມສຳຄັນ

ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີຄວາມສຳຄັນຫຼາຍເພາະວ່າແມ່ນກົນໄກ ແກ້ໄຂຂໍ້ຂັດແຍ່ງທີ່ຮັບປະກັນສິດ ແລະ ຜົນປະໂຫຍດຂອງຄູ່ກໍລະນີຊຶ່ງສະແດງອອກດັ່ງນີ້:

- ເປັນລະບົບການແກ້ໄຂຂໍ້ຂັດທີ່ສ້າງຂຶ້ນໂດຍລັດ ແລະ ຖືກຮັບຮູ້ໂດຍສາກົນ ປະກອບສ່ວນທີ່ສຳຄັນເຂົ້າໃນການຫຼຸດຜ່ອນການແກ້ໄຂຄະດີຢູ່ສານປະຊາຊົນ;
- ເປັນການຫັນເຂົ້າສູ່ລະບົບການແກ້ໄຂຂໍ້ຂັດແຍ່ງສາກົນເທື່ອລະກ້າວ, ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ແກ່ຄູ່ກໍລະນີ, ຜູ້ໄກ່ເກ່ຍ ຫຼືຜູ້ຕັດສິນ ໃນການດຳເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
- ເປັນການແກ້ໄຂບັນຫາທີ່ແທດເໝາະກັບສະພາວະຄວາມເປັນຈິງຂອງຂໍ້ຂັດແຍ່ງບົນພື້ນຖານຄວາມສະໝັກໃຈຂອງຄູ່ກໍລະນີ ໂດຍບໍ່ມີການບັງຄັບ, ນາບຂູ່, ບໍ່ມີການຈຳແນກເພດ, ເຊື້ອຊາດ, ສາສະໜາ, ສັນຊາດ, ເຜົ່າຊົນ, ຖານະທາງດ້ານເສດຖະກິດ ແລະ ສັງຄົມ, ພາສາ, ລະດັບການສຶກສາ, ອາຍຸ, ຄວາມເຊື່ອຖື, ພູມລຳເນົາ, ບໍ່ເຂົ້າຂ້າງອອກຂາ, ບໍ່ມີການແຊກແຊງຈາກພາຍນອກ, ຖືເອົາຄຸນນະທຳ, ເຫັນອົກເຫັນໃຈກັນຂອງຄູ່ກໍລະນີ, ມີການຜ່ອນຜັນ ຫຼື ຍິນຍອມກັນລະຫວ່າງຄູ່ກໍລະນີ ແລະ ພິຈາລະນາແກ້ໄຂບົນພື້ນຖານກົດໝາຍ ແລະລະບຽບການ;
- ເປັນວິທີການແກ້ໄຂຂໍ້ຂັດແຍ່ງ ທີ່ຍຸຕິທຳ, ມະນຸດສະທຳ ແລະ ມີຂະບວນການດຳເນີນທີ່ກະທັດຮັດ, ຜົນຂອງການແກ້ໄຂບໍ່ສາມາດອຸທອນໄດ້ ເຮັດໃຫ້ຄູ່ກໍລະນີປະຢັດຄ່າໃຊ້ຈ່າຍ ແລະ ເວລາ;
- ຂໍ້ຂັດແຍ່ງທີ່ຖືກນຳມາພິຈາລະນາແກ້ໄຂນັ້ນ ແມ່ນບໍ່ສາມາເປີດເຜີຍສູ່ສັງຄົມ, ເວັ້ນເສຍແຕ່ໄດ້ຮັບອະນຸຍາດຈາກຄູ່ກໍລະນີ;
-ປະກອບສ່ວນອັນສຳຄັນເຂົ້າໃນການສ້າງຄວາມເປັນລະບຽບຮຽບຮ້ອຍໃຫ້ແກ່ສັງຄົມ ແນໃສ່ເຮັດໃຫ້ການພັດທະນາເສດຖະກິດ - ສັງຄົມຂະຫຍາຍຕົວ ແລະ ຍືນຍົງ;
- ເປັນຕົວຊີ້ວັດໜຶ່ງທີ່ສຳຄັນໃນການຂັບເຄື່ອນ ແລະ ສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການດຳເນີນທຸລະກິດ.

## III.ຄວາມແຕກຕ່າງລະຫວ່າງຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ຂໍ້ຂັດແຍ່ງອື່ນ

### 3.1. ຂໍ້ຂັດແຍ່ງທາງດ້ານເສດຖະກິດ

ຂໍ້ຂັດແຍ່ງທາງດ້ານເສດຖະກິດແມ່ນຂໍ້ພິພາດທາງດ້ານຜົນປະໂຫຍດລະຫວ່າງນິຕິບຸກຄົນດ້ວຍກັນ, ນິຕິບຸກຄົນກັບບຸກຄົນ ຫຼື ກັບການຈັດຕັ້ງ, ບຸກຄົນກັບບຸກຄົນ,ບຸກຄົນກັບການຈັດຕັ້ງທັງພາຍໃນແລະຕ່າງປະເທດທີ່ເກີດຂຶ້ນຈາກການລະເມີດສັນຍາທາງດ້ານເສດຖະກິດ ຫຼືການດຳເນີນທຸລະກິດ.

ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດດ້ວຍຮູບການໄກ່ເກ່ຍ ແລະ ຮູບການຕັດສິນ ມີຄວາມສຳຄັນຫຼາຍແກ່ຄູ່ກໍລະນີເນື່ອງຈາກວ່າ ການແກ້ໄຂຂໍ້ຂັດແຍ່ງດ້ວຍວິທີນີ້ ສາມາດຮັກສາຄວາມລັບ, ຮັກສາຄວາມສາມັກຄີ, ມີຄວາມວ່ອງໄວ ແລະ ປະຢັດຄ່າໃຊ້ຈ່າຍໃຫ້ແກ່ຄູ່ກໍລະນີ. ນອກນັ້ນ, ການແກ້ໄຂດ້ວຍຮູບການນີ້ ຍັງມີຄວາມສຳຄັນແກ່ຂະບວນການແກ້ໄຂຂໍ້ຂັດແຍ່ງໃນສັງຄົມ ເພື່ອປະກອບສ່ວນເຂົ້າໃນການເພີ່ມທະວີນິຕິທຳ ແລະ ເຮັດໃຫ້ສັງຄົມມີຄວາມສະຫງົບ.

### 3.2.ຂໍ້ຂັດແຍ່ງທາງແພ່ງ

ຂໍ້ຂັດແຍ່ງທາງແພ່ງ ແມ່ນຂໍ້ຂັດແຍ່ງກ່ຽວກັບກຳມະສິດ ແລະ ມູນມໍຣະດົກ,ຂໍ້ຂັດແຍ່ງກ່ຽວກັບການທວງເອົາການໃຊ້ແທນຄ່າເສຍຫາຍ,ສາຍພົວພັນທາງແພ່ງ ຍົກເວັ້ນຂໍ້ຂັດແຍ່ງທາງການຄ້າ ທີ່ໄດ້ກຳນົດໄວ້ໃນມາດຕາ 37 ໃນກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ເຊັ່ນ: ສັນຍາຮຸ້ນສ່ວນ, ສັນຍາທາງດ້ານທຸລະກິດ, ການຄ້າ, ໃບສັນຍາໃຊ້ໜີ້, ພັນທະບັດແລກເງິນ, ເຊັກ, ສັນຍາກູ້ຢືມທາງການຄ້າ, ການລົ້ມລະລາຍຂອງວິສາຫະກິດແລະການຊຳລະສະສາງ, ການສົ່ງອອກຫຼືນຳເຂົ້າສິນຄ້າ, ການປະກັນໄພ,ຂໍ້ຂັດແຍ່ງ ແລະ ຄຳຮ້ອງຟ້ອງ ກ່ຽວກັບການລະເມີດຊັບສິນທາງປັນຍາ ເປັນຕົ້ນລິຂະສິດ, ເຄື່ອງໝາຍການຄ້າ, ສິດທິບັດ ແລະ ການກະທຳອື່ນ ທີ່ພາໃຫ້ເກີດການແຂ່ງຂັນທີ່ບໍ່ເປັນທຳຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ຊັບສິນທາງປັນຍາ.

### 3.3.ຂໍ້ຂັດແຍ່ງທາງດ້ານບໍລິຫານ

ຂໍ້ຂັດແຍ່ງທາງດ້ານບໍລິຫານ ແມ່ນຂໍ້ຂັດແຍ່ງທີ່ເກີດຂຶ້ນຈາກການອອກຄຳສັ່ງ, ແຈ້ງການ ທີ່ຂັດກັບລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ ຊຶ່ງມີຜົນກະທົບ, ສ້າງຄວາມເສຍຫາຍ, ບໍ່ອຳນວຍຄວາມສະດວກ ໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ, ຄະດີກ່ຽວກັບສາຍພົວພັນທາງດ້ານບໍລິຫານ ທີ່ບໍ່ມີອົງປະກອບຂອງການກະທຳຜິດທາງອາຍາ ຊຶ່ງສານຈະພິຈາລະນາຕັດສິນ ມີດັ່ງນີ້[3]:

- ຄະດີກ່ຽວກັບຄວາມຜິດພາດ ໃນການຂຶ້ນບັນຊີຜູ້ມີສິດເລືອກຕັ້ງ ຊຶ່ງຄະນະກຳມະການເລືອກຕັ້ງບໍ່ສາມາດແກ້ໄຂໄດ້;
- ຄະດີກ່ຽວກັບການກະທຳຂອງພະນັກງານອົງການບໍລິຫານ ກ່ຽວກັບການປັບໃໝ, ການເກັບອາກອນລາຍໄດ້ ທີ່ບໍ່ຖືກຕ້ອງ ແລະ ອື່ນໆ;
- ຄະດີກ່ຽວກັບການຮິບຊັບສິ່ງຂອງ ໂດຍບໍ່ຖືກຕ້ອງ;
- ຄະດີກ່ຽວກັບຄວາມຜິດພາດອື່ນ ໃນຂົງເຂດບໍລິຫານ.

ຂໍ້ຂັດແຍ່ງທາງດ້ານບໍລິຫານ ແມ່ນ ຂໍ້ຂັດແຍ່ງທີ່ເກີດຂຶ້ນໃນຂະແໜງການ,ອົງການຂອງລັດ ຊຶ່ງຂໍ້ຂັດແຍ່ງດັ່ງກ່າວນີ້ ອາດມີຫຼາຍສາເຫດ ເຊັ່ນ:

[3] ມາດຕາ 32, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2012.

- ການຮ່າງພາລະບົດບາດ ຂອງອົງການທີ່ຂັດກັນ,ຊໍ້າກັນ ພາໃຫ້ການຈັດຕັ້ງປະຕິບັດໜ້າທີ່ວຽກງານ ເກາະກ່າຍກັນ ແລະ ອື່ນໆ;
- ການວາງລະບຽບການຄຸ້ມຄອງທີ່ບໍ່ສອດຄ່ອງກັບສະພາວະຄວາມເປັນຈິງຂອງສັງຄົມ ຊຶ່ງພາໃຫ້ການຈັດຕັ້ງປະຕິບັດມີຄວາມຫຍຸ້ງຍາກ ແລະ ບໍ່ປະສົບຜົນສຳເລັດເທົ່າທີ່ຄວນ.

ສະຫຼຸບແລ້ວ ມີແຕ່ຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ຂໍ້ຂັດແຍ່ງທາງແພ່ງທີ່ມີເປົ້າໝາຍທາງການຄ້າເທົ່ານັ້ນ ຈຶ່ງສາມາດນຳມາພິຈາລະນາແກ້ໄຂຢູ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ສ່ວນຂໍ້ຂັດແຍ່ງທາງດ້ານບໍລິຫານ ແລະ ຂໍ້ຂັດແຍ່ງອື່ນ ແມ່ນນຳໄປພິຈາລະນາແກ້ໄຂຕາມພາລະບົດບາດຂອງອົງການທີ່ກ່ຽວຂ້ອງ.

## IV.ຮູບການ ແລະ ຫຼັກການຂອງແກ້ໄຂຂໍ້ຂັດແຍ່ງ

### 4.1. ຮູບການ

ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຢູ່ ສປປລາວ ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໄດ້ກຳນົດສອງຮູບການຄື: ການແກ້ໄຂດ້ວຍຮູບການໄກ່ເກ່ຍ ແລະ ຮູບການຕັດສີນ.

### 4.2. ການໄກ່ເກ່ຍ

ການໄກ່ເກ່ຍ ແມ່ນຮູບການໜຶ່ງຂອງການແກ້ໄຂຂໍ້ຂັດແຍ່ງຂອງຄູ່ກໍລະນີ ດ້ວຍການປຶກສາຫາລື,ປະນີປະນອມ ແລະ ເຈລະຈາ ຊຶ່ງດຳເນີນໂດຍຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກ່ເກ່ຍ.

ການແກ້ໄຂຂໍ້ຂັດແຍ່ງດ້ວຍການໄກ່ເກ່ຍ ແມ່ນການແກ້ໄຂຂອງຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກ່ເກ່ຍເພື່ອເຮັດໃຫ້ຄູ່ກໍລະນີ ສາມາດປະນີປະນອມ, ເຂົ້າໃຈກັນໂດຍມີຜູ້ໄກ່ເກ່ຍເປັນຄົນກາງ ດ້ວຍການອຳນວຍຄວາມສະດວກ , ຊ່ວຍເຫຼືອ, ໃຫ້ຄຳປຶກສາ ແລະ ຊອກຫາທາງອອກ ພາໃຫ້ຂໍ້ຂັດແຍ່ງຢຸດຕິລົງ ບົນພື້ນຖານຄວາມສະໝັກໃຈຂອງຄູ່ກໍລະນີ ແລະ ປະຕິບັດໄດ້ໂດຍຄູ່ກໍລະນີເອງ, ສະນັ້ນ, ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຈຶ່ງໄດ້ກຳນົດຄວາມໝາຍຂອງການໄກ່ເກ່ຍວ່າແມ່ນການແກ້ໄຂຂໍ້ຂັດແຍ່ງໂດຍຄູ່ກໍລະນີເອງດ້ວຍການປະນີປະນອມ, ເຈລະຈາ ແລະ ປຶກສາຫາລື ຊຶ່ງມີຜູ້ໄກ່ເກ່ຍຜູ້ໜຶ່ງ ຫຼື ຄະນະກຳມະການໄກ່ເກ່ຍເປັນຄົນກາງ.

### 4.3. ການຕັດສີນ

ການຕັດສີນແມ່ນຮູບການໜຶ່ງໃນການແກ້ໄຂຂໍ້ຂັດແຍ່ງ ດ້ວຍການຕົກລົງຂອງຜູ້ຕັດສີນ ຫຼື ຄະນະກຳມະການຕັດສີນຕໍ່ຂໍ້ຂັດແຍ່ງຂອງຄູ່ກໍລະນີ. ຜູ້ຕັດສີນ ຫຼື ຄະນະກຳມະການຕັດສີນ ຕ້ອງດຳເນີນການຕັດສີນໃຫ້ສຳເລັດ ພາຍໃນເວລາສາມເດືອນ ນັບແຕ່ວັນໄດ້ຮັບການແຕ່ງຕັ້ງເປັນຕົ້ນໄປ ເວັ້ນເສຍແຕ່ກໍລະນີທີ່ມີຄວາມຫຍຸ້ງຍາກ ຍ້ອນການປະກອບຫຼັກຖານ ຫຼື ດ້ວຍເຫດຜົນອື່ນ ແຕ່ຜູ້ຕັດສີນ ຫຼື ຄະນະກຳມະການຕັດສີນ ຕ້ອງແຈ້ງໃຫ້ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອແຈ້ງເຫດຜົນດັ່ງກ່າວໃຫ້ຄູ່ກໍລະນີຮັບຮູ້. ຜູ້ຕັດສີນ ຫຼື ຄະນະກຳມະການຕັດສີນ ຕ້ອງກຳນົດແຜນການຕັດສີນ ແລ້ວແຈ້ງໃຫ້ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະ
ກິດ.

### 4.4.ຫຼັກການ

ການແກ້ໄຂຂໍ້ຂັດແຍ່ງຂອງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງປະຕິບັດຕາມຫຼັກການພື້ນຖານດັ່ງນີ້:

1) ຄວາມສະໝັກໃຈຂອງຄູ່ກໍລະນີ; ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຫຼັກການຄວາມສະໝັກໃຈຖືເປັນຫຼັກການພື້ນຖານທີ່ຂາດບໍ່ໄດ້ດັ່ງນັ້ນ, ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈຶ່ງໄດ້ກຳນົດວ່າ ແມ່ນຄູ່ກໍລະນີມີສິດນຳເອົາຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 16 ຂອງກົດ

ໝາຍສະບັບນີ້ ສະເໜີຕໍ່ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອແກ້ໄຂໂດຍບໍ່ມີການບັງຄັບ, ນາບຂູ່ຈາກບຸກຄົນ,ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ.

2) ການຮັບປະກັນຄວາມຍຸຕິທຳ, ວ່ອງໄວ ແລະ ຄວາມສອດຄ່ອງກັບກົດໝາຍ; ໃນການຂໍ້ຂັດແຍ່ງທາງດ້ານເສດຖະກິດ ຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ຍເກ່ຍ, ຜູ້ຕັດສິນ ແລະ ຄະນະກຳມະການຕັດສິນ ຕ້ອງການຮັບປະກັນຄວາມຍຸຕິທຳ,ວ່ອງໄວ ແລະ ຄວາມສອດຄ່ອງກັບກົດໝາຍ.

3) ຄວາມສະເໝີພາບຂອງຄູ່ກໍລະນີ; ໃນການຂໍ້ຂັດແຍ່ງທາງດ້ານເສດຖະກິດ ຄູ່ກໍລະນີມີຄວາມສະເໝີພາບຕໍ່ໜ້າກົດໝາຍໂດຍບໍ່ຈຳແນກເພດ,ເຊື້ອຊາດ,ສັນຊາດ, ເຜົ່າ, ຖານະທາງດ້ານເສດຖະກິດ ແລະ ສັງຄົມ, ພາສາ, ລະດັບການສຶກສາ, ອາຍຸ,ຄວາມເຊື່ອຖື,ພູມລຳເນົາ ແລະ ອື່ນໆ.

ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ທີ່ດຳເນີນທຸລະກິດ ຢູ່ ສປປ ລາວ ມີຄວາມສະເໝີພາບຄືກັນກັບພົນລະເມືອງລາວ ຖ້າຫາກວ່າກົດໝາຍບໍ່ໄດ້ກຳນົດໄວ້ເປັນຢ່າງອື່ນ.

ຄວາມສະເໝີພາບໃນການແກ້ໄຂຂໍ້ຂັດແຍ່ງ ຕໍ່ໜ້າກົດໝາຍຂອງ ຄູ່ກໍລະນີສະແດງອອກດັ່ງນີ້:

- ໃນການກຳນົດ ຫຼື ເລືອກສະຖານທີ່ແກ້ໄຂຂໍ້ຂັດແຍ່ງ ຊຶ່ງບາງຄັ້ງກໍໄດ້ກຳນົດໄວ້ໃນສັນຍາ ຫຼື ຄູ່ກໍລະນີອາດເຫັນດີນຳເອົາຂໍ້ຂັດແຍ່ງດັ່ງກ່າວໄປແກ້ໄຂຢູ່ພາຍໃນ ຫຼື ຕ່າງປະເທດ.
- ໃນການເລືອກຮູບການແກ້ໄຂຂໍ້ຂັດແຍ່ງ ຢູ່ ສກສ ຫຼື ຫກສ.
- ໃນການເລືອກ ຫຼື ຄ້ານຕົວ ຜູ້ໄກ່ເກ່ຍ ຫຼື ກຳມະການຕັດສິນ.
- ການສະເໜີຂໍ້ມູນຫຼັກຖານ.
- ໃນການຈັດຕັ້ງປະຕິບັດຜົນຂອງການແກ່ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

4) ຄວາມເປັນເອກະລາດ,ທ່ຽງທຳ ແລະ ໂປ່ງໃສ ຂອງການໄກ່ເກ່ຍ,ຄະນະກຳມະການໄກ່ຍເກ່ຍ,ຜູ້ຕັດສິນ ແລະ ຄະນະກຳມະການຕັດສິນ; ໃນການຂໍ້ຂັດແຍ່ງທາງດ້ານເສດຖະກິດ ຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ຍເກ່ຍ, ຜູ້ຕັດສິນ ແລະ ຄະນະກຳມະການຕັດສິນ ຕ້ອງປະຕິບັດໜ້າທີ່ຂອງຕົນ ຢ່າງເປັນເອກະລາດ, ດ້ວຍຄວາມທ່ຽງທຳ ແລະ ໂປ່ງໃສພາຍໃຕ້ກົດໝາຍ ແລະ ລະບຽບການ, ປາສະຈາກການແຊກແຊງຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ.

ຄວາມເປັນເອກະລາດ ໝາຍເຖິງການປະຕິບັດໜ້າທີ່ຂອງຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນ ປະຕິບັດໜ້າທີ່ ຢ່າງເປັນອິດສະລະຕາມກົດໝາຍໂດຍປາສະຈາກການແຊກແຊງຈາກບຸກຄົນ,ນິຕິບຸກຄົນ ຫຼື ອົງການຈັດຕັ້ງໃດໜຶ່ງ.

ຄວາມທ່ຽງທຳ ໝາຍເຖິງຜູ້ໄກ່ເກ່ຍ ຫຼື ກຳມະການຕັດສິນ ຕ້ອງມີຈັນຍາບັນ-ຈັນຍາທຳຕໍ່ຫຼັກວິຊາຊີບ,ບໍ່ມີອະຄະຕິ,ບໍ່ເຂົ້າຂ້າງອອກຂາບົນພື້ນຖານຄວາມເປັນຈິງຂອງຂໍ້ຂັດແຍ່ງທີ່ເກີດຂຶ້ນ,ອີງໃສ່ຂໍ້ມູນຫຼັກຖານທີ່ໜັກແໜ້ນຕາມກົດໝາຍ.

5) ພາສາທີ່ນຳໃຊ້; ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃຫ້ໃຊ້ພາສາລາວ ເວັ້ນເສຍແຕ່ສັນຍາ ຫຼື ຄູ່ກໍລະນີຫາກຕົກລົງກັນນຳໃຊ້ພາສາອື່ນ.

ພາສາທີ່ນຳໃຊ້ເຂົ້າໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຢູ່ ສກສ ຫຼື ຫກສ ຕ້ອງແມ່ນພາສາລາວ ເວັ້ນເສຍແຕ່ ສັນຍາ ຫຼື ຄູ່ກໍລະນີ ຫາກໄດ້ຕົກລົງກັນນຳໃຊ້ພາສາອື່ນ,ສ່ວນຄູ່ກໍລະນີ ຫຼື ຜູ້ເຂົ້າຮ່ວມໃນການຂັດແຍ່ງ ທີ່ບໍ່ຮູ້ພາສາລາວ ສາມາດນຳໃຊ້ພາສາຕົນເອງ ຫຼື ພາສາອື່ນ ໂດຍຜ່ານຜູ້ແປພາສາ ໝາຍຄວາມວ່າ ທຸກຂໍ້ຂັດແຍ່ງທີ່ນຳມາແກ້ໄຂຢູ່ ສກສ ຫຼື ຫສກ ຕ້ອງນຳໃຊ້ພາສາລາວ,ຖ້າຄູ່ກໍລະນີຝ່າຍໃດຝ່າຍໜຶ່ງ ຫຼື ທັງສອງຝ່າຍ ຫາກບໍ່ຮູ້ພາສາລາວ ກໍສາມາດນຳໃຊ້ພາສາຂອງຕົນ ຫຼື ພາສາອື່ນກໍໄດ້ໂດຍຜ່ານຜູ້ແປພາສາ.

6) ການຮັບປະກັນຄວາມລັບ. ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍ, ຜູ້ຕັດສິນ ແລະ ຄະນະກຳມະການຕັດສິນ, ຄູ່ກໍລະນີ ແລະ ຜູ້ເຂົ້າຮ່ວມອື່ນ ບໍ່ມີສິດເປີດເຜີຍຄວາມລັບກ່ຽວກັບຂໍ້ມູນ ແລະ ເອກະສານຕ່າງໆ ທີ່ໄດ້ນຳສະເໜີໃນເວລາໄກ່ເກ່ຍ ຫຼື ຕັດສິນ ເວັ້ນເສັຍແຕ່ໄດ້ຮັບອະນຸຍາດຈາກຄູ່ກໍລະນີເທົ່ານັ້ນ.

ຄູ່ກໍລະນີ, ຜູ້ເຂົ້າຮ່ວມອື່ນ, ຜູ້ໄກ່ເກ່ຍ ແລະ ຄະນະກຳມະການຕັດສິນ ບໍ່ມີສິດເປີດເຜີຍເນື້ອໃນຂອງຂໍ້ຂັດແຍ່ງທີ່ຕົນໄດ້ຮູ້ໂດຍບໍ່ໄດ້ຮັບອານຸຍາດຈາກຄູ່ກໍລະນີ,ບໍ່ມີສິດນຳໃຊ້ຂໍ້ມູນທີ່ຕົນເອງໄດ້ຮັບຮູ້ເພື່ອຜົນປະໂຫຍດສ່ວນຕົວ ຫຼື ເພື່ອລະເມີດສິດ ແລະ ຜົນປະໂຫຍດຂອງບຸກຄົນອື່ນ.ໃນກໍລະນີມີການລະເມີດທີ່ສ້າງຄວາມເສຍຫາຍໃຫ້ແກ່ລັດ,ສັງຄົມຫຼືບຸກຄົນອື່ນ ຜູ້ລະເມີດກໍຈະຖືກປະຕິບັດມາຕະການສຶກສາອົບຮົມ, ລົງວິໄນ, ປັບໃໝ ຫຼື ດຳເນີນຄະດີຕາມກົດໝາຍ ພ້ອມທັງໃຊ້ແທນຄ່າເສຍຫາຍທີ່ເກີດຂຶ້ນ.

ນອກຈາກບັນດາຫຼັກການທີ່ໄດ້ອະທິບາຍມາຂ້າງເທິງນີ້ແລ້ວ ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຢູ່ໃນ ສກສ ຫຼື ຫສກ ຍັງຕ້ອງໄດ້ອີງໃສ່ຫຼັກການວິຊາສະເພາະຕື່ມອີກ ຊຶ່ງຜູ້ໄກ່ເກ່ຍ ຫຼື ກຳມະການຕັດສິນ ຕ້ອງເປັນຜູ້ມີຄວາມຮູ້ຄວາມສາມາດທາງດ້ານວິຊາສະເພາະໃດໜຶ່ງທີ່ແນ່ນອນ ໂດຍມີໃບຢັ້ງຢືນຢ່າງຖືກຕ້ອງ ແລະ ໄດ້ຜ່ານ ຫຼື ມີປະສົບການໃນວຽກງານນັ້ນຢ່າງນ້ອຍຫ້າປີ.

**ຕົວຢ່າງ:** ຂໍ້ຂັດແຍ່ງທີ່ເກີດຂຶ້ນກ່ຽວກັບການບໍ່ປະຕິບັດສັນຍາຂົນສົ່ງ.ຄູ່ກໍລະນີ ສາມາດເລືອກຜູ້ໄກ່ເກ່ຍ ຫຼື ກຳມະການຕັດສິນ ທີ່ມີຄວາມຮູ້ ແລະປະສົບການກ່ຽວກັບການຂົນສົ່ງມາເປັນຜູ້ໄກ່ເກ່ຍ ຫຼື ຄະນະກຳມະການຕັດສິນຜູ້ກ່ຽວຈຶ່ງສາມາດຮູ້ໄດ້ເຖິງລະບຽບການ, ຄວາມຫຍຸ້ງຍາກຂອງການຂົນສົ່ງ ແລະ ຜົນເສຍຫາຍຕໍ່ສິນຄ້າທີ່ຂົນສົ່ງ.

## V.ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

### 5.1. ກົດໝາຍ

#### 5.1.1.ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ

ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງແມ່ນກຳນົດຫຼັກການ,ລະບຽບການ ແລະ ມາດຕະການ ຂອງການດຳເນີດຄະດີເພື່ອແກ້ໄຂຂໍ້ຂັດແຍ່ງ ຫຼື ການຮ້ອງຂໍທາງແພ່ງ,ການຄ້າ,ຄອບຄົວ,ເດັກ ແລະ ແຮງງານໃຫ້ຖືກຕ້ອງຕາມຄວາມເປັນຈິງ,ສອດຄ່ອງກັບກົດໝາຍ ແລະ ຄວາມຍຸຕິທຳ ແນໃສ່ປົກປັກຮັກສາ ລະບອບເສດຖະກິດ-ສັງຄົມ,ປົກປ້ອງກຳມະສິດຂອງລັດ,ລວມໝູ່,ອົງການຈັດຕັ້ງ,ວິສາຫະກິດ, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຄູ່ຄວາມ,ເພີ່ມທະວີນິຕິທຳ,ຈຳກັດ ແລະ ກັດກັ້ນການລະເມີດກົດໝາຍ,ສຶກສາອົບຮົມສະຕິເຄົາລົບ ແລະ ປະຕິບັດກົດໝາຍຢ່າງເຂັ້ມງວດ,ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງປະເທດຊາດ.

- ຄະດີແພ່ງແມ່ນຂໍ້ຂັດແຍ່ງກ່ຽວກັບສາຍພົວພັນທີ່ມີລັກສະນະຊັບສິນບັດເຊັ່ນ: ກຳມະສິດກ່ຽວກັບວັດ ຖຸສິ່ງຂອງ, ເງິນ,ຄຳ, ຊັບສິນທາງປັນຍາ ແລະ ບາງສາຍພົວພັນສ່ວນຕົວ ທີ່ບໍ່ມີລັກສະນະຊັບສິນບັດເຊັ່ນ: ຊື່, ນາມສະກຸນ , ກຽດສັກສີ;

- ການດຳເນີນຄະດີແພ່ງແມ່ນການເຄື່ອນໄຫວຂອງສານແລະຂອງຜູ້ເຂົ້າຮ່ວມໃນການດຳເນີນຄະດີເພື່ອພິຈາລະນາແກ້ໄຂການຮ້ອງຟ້ອງ ແລະ ການຮ້ອງຂໍທາງແພ່ງ, ການຄ້າ, ຄອບຄົວ.ເດັກ, ແຮງງານ ແລະ ຂໍ້ຂັດແຍ່ງອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

#### 5.1.2. ປະມວນກົດໝາຍແພ່ງ

ປະມວນກົດໝາຍແພ່ງ ແມ່ນການລວບລວມຢ່າງເປັນລະບົບເຂົ້າເປັນກົດໝາຍສະບັບດຽວ ບັນດາບົດບັນຍັດກ່ຽວກັບການເກີດ, ການປ່ຽນແປງ ແລະ ການສິ້ນສຸດສິດ ແລະ ພັນທະຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ

ໃນສາຍພົວພັນທາງແພ່ງເຊັ່ນ: ຊັບ, ກຳມະສິດ, ຄອບຄົວ, ຂໍ້ຜູກພັນໃນສັນຍາ ແລະ ຂໍ້ຜູກພັນນອກສັນຍາ, ມູນມໍຣະດົກ.

**5.1.3. ກົດໝາຍວ່າດ້ວຍປະຕິບັດຄຳຕັດສິນຂອງສານ**

ກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານກຳນົດຫຼັກການ, ລະບຽບການ, ວິທີການ ແລະ ມາດຕະການກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານທາງແພ່ງ, ກຳນົດທີ່ຕັ້ງ, ພາລະບົດບາດ, ສິດ ແລະໜ້າທີ່ຂອງອົງການຄຸ້ມຄອງ ແລະ ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແຕ່ສູນກາງລົງຮອດທ້ອງຖິ່ນລວມທັງສິດ ແລະ ໜ້າທີ່ຂອງພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແນໃສ່ເຮັດໃຫ້ຄຳຕັດສິນຂອງສານ ໄດ້ຮັບການຈັດຕັ້ງປະຕິບັດຢ່າງເຂັ້ມງວດ, ຖືກຕ້ອງ, ວ່ອງໄວ ແລະ ເປັນເອກະພາບທົ່ວປະເທດ; ເພີ່ມທະວີຄວາມສັກສິດຂອງອຳນາດລັດ ແລະ ຂອງກົດໝາຍ; ປົກປ້ອງສິດ, ຜົນປະໂຫຍດຂອງລັດ, ສິດຜົນປະໂຫຍດອັນຊອບທຳຂອງລວມໝູ່ ແລະ ຂອງພົນລະເມືອງ, ເຮັດໃຫ້ສັງຄົມມີຄວາມສະຫງົບ, ມີຄວາມເປັນລະບຽບຮຽບຮ້ອຍ ແລະ ມີຄວາມຍຸຕິທຳ.

**5.2.ລະບຽບການ**

**5.2.1. ລະບຽບການພາຍໃນ**

- ດຳລັດວ່າດ້ວຍການຕີລາຄາ, ການປະມູນຂາຍ ແລະ ການມອບຊັບໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ສະບັບເລກທີ່158/ລບ, ລົງວັນທີ4 ມິຖຸນາ 2013;
- ຂໍ້ຕົກລົງຂອງລັດຖະມົນຕີກະຊວງຍຸຕິທຳ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບເລກທີ320/ກຍ,ລົງວັນທີ27ມີນາ 2017;
- ຂໍ້ຕົກລົງຂອງລັດຖະມົນຕີກະຊວງຍຸຕິທຳ ກ່ຽວກັບການປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເລກທີ226/ກຍ, ລົງວັນທີ26ມີນາ2014.
- ຄຳແນະນຳຂອງປະທານສານປະຊາຊົນສູງສຸດວ່າດ້ວຍການພິຈາລະນາຂອງສານປະຊາຊົນ ຕໍ່ຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ62ກຸມພາ2019.

**5.2.2.ລະບຽບການສາກົນ**

- **ສົນທິສັນຍານິວຢອກ1958ວ່າດ້ວຍການຮັບຮູ້ຈັດຕັ້ງປະຕິບັດຄຳຕັດສິນຂອງຄະນະກຳມະການຕັດສິນຕ່າງປະເທດ.**

**1) ຂອບເຂດການນຳໃຊ້**

ສົນທິສັນຍາສະບັບນີ້ ໃຊ້ປະຕິບັດຕໍ່ການຮັບຮູ້ ແລະ ການຈັດຕັ້ງປະຕິບັດຄຳຕັດສິນຂໍ້ຂັດແຍ່ງທາງດ້ານເສດຖະກິດ ທີ່ໄດ້ຕັດສິນຢູ່ດິນແດນຂອງລັດໃດໜຶ່ງທີ່ບໍ່ແມ່ນດິນແດນຂອງລັດ ທີ່ຖືກຮ້ອງຂໍໃຫ້ຮັບຮູ້ແລະ ຈັດຕັ້ງປະຕິບັດ ແລະ ແມ່ນຂໍ້ຂັດແຍ່ງທີ່ເກີດຂຶ້ນລະຫວ່າງບຸກຄົນ ຫຼື ນິຕິບຸກຄົນດ້ວຍກັນ. ສົນທິສັນຍາສະບັບນີ້ຍັງໃຊ້ປະຕິບັດຕໍ່ບັນດາຄຳຕັດສິນຂໍ້ຂັດແຍ່ງທາງດ້ານເສດຖະກິດ ທີ່ບໍ່ໄດ້ຖືວ່າແມ່ນຄຳຕັດສິນພາຍໃນຂອງລັດທີ່ຖືກຮ້ອງຂໍໃຫ້ມີການຮັບຮູ້ ແລະຈັດຕັ້ງປະຕິບັດນັ້ນ.

**2) ຜົນສັກສິດຂອງສົນທິສັນຍາ**

ເມື່ອມີການລົງນາມ,ໃຫ້ສັດຕະຍາບັນ ຫຼື ເຂົ້າຮ່ວມເປັນພາຄີ ຂອງສົນທິສັນຍາສະບັບນີ້ ຫຼື ເຮັດແຈ້ງການຕາມທີ່ລະບຸໄວ້ໃນມາດຕາ10ບົນພື້ນຖານການປະຕິບັດຕໍ່ກັນ ລັດໃດໜຶ່ງອາດຈະຖະແຫຼງວ່າສົນທິສັນຍາສະບັບນີ້ຈະໃຊ້ປະຕິບັດສະເພາະຕໍ່ຄຳຕັດສິນ ທີ່ໄດ້ຕັດສິນຢູ່ດິນແດນຂອງລັດພາຄີອື່ນ.ລັດດັ່ງກ່າວອາດຈະຖະແຫຼງເໝືອນກັນ

ວ່າ ຈະປະຕິບັດສົນທິສັນຍາສະເພາະຕໍ່ຂໍ້ຂັດແຍ່ງ ທີ່ເກີດຂຶ້ນຈາກສາຍພົວພັນທາງດ້ານກົດໝາຍ,ສັນຍາ ຫຼື ນອກສັນຍາ ຊຶ່ງຖືວ່າເປັນສາຍພົວພັນທາງການຄ້າຕາມກົດໝາຍຂອງຊາດຕົນ.

**3) ຄວາມຈຳເປັນໃນການເຂົ້າເປັນພາຄີຂອງສປປລາວ**

ສປປລາວ ມີຄວາມຈຳເປັນໃນການເຂົ້າເປັນພາຄີຂອງສົນທິສັນຍາສາກົນນິວຢ໋ອກ 1958ກໍເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງການລົງທຶນທັງພາຍໃນ ແລະ ຕ່າງປະເທດ ໃນກໍລະນີມີຄຳຕັດສິນທີ່ໄດ້ຕັດສິນຢູ່ໃນດິນແດນຂອງລັດພາຄີອື່ນດ້ວຍການຮັບຮູ້ຄຳຕັດສິນດັ່ງກ່າວມາປະຕິບັດຢູ່ສປປ ລາວ ຫຼື ໄປປະຕິບັດຢູ່ດິນແດນຂອງລັດພາຄີອື່ນ, ທັງເປັນການຢືນຢັນ ແລະ ສ້າງຄວາມໝັ້ນໃຈແກ່ນັກລົງທຶນຕ່າງປະເທດເປັນຕົ້ນຄວາມໝັ້ນໃຈ ຕໍ່ບົດບັນຍັດກົດ ໝາຍ ແລະ ລະບຽບການທີ່ສອດຄ່ອງກັບສົນທິສັນຍາດັ່ງກ່າວໃນຖານະທີ່ ສປປ ລາວ ເປັນລັດພາຄີ. ການເປັນລັດພາຄີຂອງສົນທິສັນຍາ1958 ຍັງເປັນການດຶງດູດການລົງທຶນຕ່າງປະເທດມາລົງທຶນຫຼື ດຳເນີນທຸລະກິດຢູ່ ສປປລາວທັງເປັນການຮັບຮູ້ ແລະ ປະຕິບັດຄຳຕັດສິນກ່ຽວກັບຂໍ້ຂັດແຍ່ງທີ່ເກີດຈາກການປະຕິບັດສັນຍາທາງການຄ້າ, ການລົງທຶນ, ການບໍລິການ ແລະອື່ນໆໂດຍການຕັດສິນຂອງຄະນະກຳມະການຢູ່ຕ່າງປະເທດແລ້ວນຳມາຂໍການຢັ້ງຢືນ ແລະປະຕິບັດຢູ່ ສປປ ລາວ.ສະນັ້ນ, ສປປລາວຈຶ່ງໄດ້ເຂົ້າຮ່ວມເປັນພາຄີຂອງສົນທິສັນຍາດັ່ງກ່າວ ແຕ່ວັນທີ15 ກັນຍາ1998ຕາມແຈ້ງການ ສະບັບເລກທີ 2425/ຫສນຍເປັນຕົ້ນມາ.

- **ສົນທິສັນຍາສິງກະໂປ2019ວ່າດ້ວຍການໄກ່ເກ່ຍ**

ສົນທິສັນຍາສິງກະໂປ 2019 ວ່າດ້ວຍການໄກ່ເກ່ຍ ໄດ້ສ້າງຂຶ້ນໂດຍຄະນະກຳມະການກົດໝາຍການຄ້າສາກົນ ແລະ ໄດ້ລົງນາມ ໃນເດືອນ ສິງຫາ 2019 ທີ່ປະເທດສິງກະໂປ ຊຶ່ງມີຜົນສັກສິດຕໍ່ປະເທດພາຄີ ນັບແຕ່ເດືອນທັນວາ 2020 ເປັນຕົ້ນມາ. ສຳລັບ ສປປ ລາວ ແມ່ນຍັງຢູ່ໃນໄລຍະກະກຽມເອກະສານ ເພື່ອໃຫ້ສັດຕະຍາບັນ ສົນທິສັນຍາດັ່ງກ່າວ. ສົນທິສັນຍາດັ່ງກ່າວນີ້ ປະກອບມີ 16 ມາດຕາ ຊຶ່ງສັງລວມແລ້ວ ມີເນື້ອໃນສຳຄັນ ດັ່ງລຸ່ມນີ້:

- ບັນດາປະເທດພາຄີຂອງສົນທິສັນຍາຕ້ອງຮັບຮູ້ຂໍ້ຕົກລົງຂອງຄູ່ກໍລະນີເພື່ອໄກ່ເກ່ຍຂໍ້ຂັດແຍ່ງ;
- ບັນດາປະເທດພາຄີຂອງສົນທິສັນຍາ ຕ້ອງບັງຄັບປະຕິບັດຜົນຂອງການໄກ່ເກ່ຍຂໍ້ຂັດແຍ່ງ.

**1)ຂອບເຂດໃນການນຳໃຊ້**

- ສົນທິສັນຍາສະບັບນີ້ ຈະນຳໃຊ້ສະເພາະຕໍ່ການແກ້ໄຂຂໍ້ຂັດແຍ່ງທາງດ້ານການເສດຖະກິດ (ການຄ້າ) ລະຫວ່າງປະເທດ ດ້ວຍຮູບການໄກ່ເກ່ຍເທົ່ານັ້ນ;
- ຈະບໍ່ນຳໃຊ້ຕໍ່ການແກ້ໄຂຂໍ້ຂັດແຍ່ງທີ່ດຳເນີນໂດຍສານ ຫຼື ການຕັດສິນໂດຍກຳມະການ;
- ຈະບໍ່ນຳໃຊ້ຕໍ່ການແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບການຊື້-ຂາຍເພື່ອຈຸດປະສົງນຳໃຊ້ສ່ວນຕົວ, ຂໍ້ຂັດແຍ່ງທາງຄອບຄົວ ຫຼື ຂໍ້ຂັດແຍ່ງກ່ຽວກັບການສືບທອດມູນມໍລະດົກ ແລະ ຂໍ້ຂັດແຍ່ງທີ່ກ່ຽວຂ້ອງກັບກົດໝາຍແຮງງານ.

ສຳລັບຄວາມໝາຍຂອງ"ເສດຖະກິດ(ການຄ້າ)" ແມ່ນໝາຍເຖິງ ກິດຈະກຳຕ່າງໆທີ່ເກີດຈາກ ທີ່ມີສັນຍາ ຫຼື ບໍ່ມີສັນຍາກໍ່ຕາມຊຶ່ງກວມເອົາທຸກໆກິດຈະກຳການຄ້າໃນການສະໜອງ ຫຼື ແລກປ່ຽນສິນຄ້າ ຫຼື ການບໍລິການ; ການຕົກລົງຈຳ ໜ່າຍສິນຄ້າ; ຜູ້ຕາງໜ້າທາງການຄ້າ ຫຼື ຕົວແທນຈຳໜ່າຍ; ການຜະລິດ; ການເຊົ່າ; ທະນາຄານ, ປະກັນໄພ; ສຳປະທານ; ທຸລະກິດຮ່ວມທຶນ ແລະ ຮູບແບບອື່ນໆໃນການຮ່ວມມືທາງດ້ານອຸດສາຫະກຳ ຫຼື ທຸລະກິດ ແລະ ການຂົນສົ່ງສິນຄ້າ ຫຼື ຜູ້ໂດຍສານທາງອາກາດ, ທະເລ, ລົດໄຟ ຫຼື ທາງບົກ.

**2)ຫຼັກການທົ່ວໄປ**

**ກ.**ປະເທດພາຄີຈະຕ້ອງຮັບຮູ້ຄຳຕົກລົງເພື່ອໄກ່ເກ່ຍຂໍ້ຂັດແຍ່ງແລະປະຕິບັດຜົນຂອງການໄກ່ເກ່ຍໂດຍໃຫ້ສອດຄ່ອງຕາມລະບຽບການດຳເນີນພາຍໃນລັດຕົນ ແລະ ໃຫ້ສອດຄອງຕາມເງື່ອນໄຂທີ່ກຳນົດໄວ້ໃນສົນທິສັນຍາດັ່ງກ່າວນີ້.

**ຂ.** ຖ້າມີການຮ້ອງຂໍໃຫ້ດຳເນີນການແກ້ໄຂຂໍ້ຂັດແຍ່ງດ້ວຍການໄກ່ເກ່ຍ ຫຼື ປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງດ້ວຍການໄກ່ເກ່ຍໂດຍຄູ່ກໍລະນີຝ່າຍໃດໜຶ່ງ, ປະເທດພາຄີຂອງສົນທິສັນຍາຕ້ອງອະນຸ ຍາດໃຫ້ຄູ່ກໍລະນີອີກຝ່າຍສະເໜີ ກ່ຽວກັບບັນຫາດັ່ງກ່າວ ເພື່ອພິສູດວ່າບັນຫາດັ່ງກ່າວນັ້ນ ໄດ້ຮັບການແກ້ໄຂແລ້ວ ຫຼື ບໍ.

**3)ການພິຈາລະນາຂອງປະເທດພາຄີຕໍ່ຂໍ້ຕົກລົງ ແລະ ຜົນຂອງການໄກ່ເກ່ຍ**

**ກ.** ຖ້າປະເທດພາຄີຫາກເຫັນວ່າຄຳຕົກລົງເພື່ອໄກ່ເກ່ຍແລະຜົນຂອງການໄກ່ເກ່ຍເຮັດຖືກຕ້ອງຕາມເງື່ອນໄຂທີ່ກຳນົດໄວ້ ໃນສົນທິສັນຍາສະບັບນີ້ແລ້ວ ປະເທດພາຄີ ຕ້ອງບັງຄັບປະຕິບັດຄຳຕົກລົງເພື່ອໄກ່ເກ່ຍ ແລະ ຜົນຂອງການໄກ່ເກ່ຍດັ່ງກ່າວ.

**ຂ.** ປະເທດພາຄີ ອາດຈະປະຕິເສດ ຄຳຮ້ອງຂໍ ເພື່ອໃຫ້ປະຕິບັດຕາມຂໍ້ຕົກລົງເພື່ອໄກ່ເກ່ຍ ຫຼືປະຕິບັດຜົນຂອງການໄກ່ເກ່ຍ ໃນກໍລະນີ ດັ່ງນີ້: **(1)**ຄູ່ກໍລະນີບໍ່ມີຄວາມສາມາດທາງດ້ານການປະພຶດ;**(2)**ຂໍ້ຂັດແຍ່ງບໍ່ສາມາດແກ້ໄຂໄດ້ດ້ວຍຮູບການໄກ່ເກ່ຍຕາມກົດໝາຍຂອງປະເທດພາຄີ; **(3)**ຂໍ້ຂັດແຍ່ງຂັດກັບຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ອື່ນໆ.

**4)ຂໍ້ສະຫງວນ**

ໃນສົນທິສັນຍາ ກໍ່ໄດ້ເປີດໂອກາດໃຫ້ລັດພາຄີ ສາມາດກຳນົດຂໍ້ສະຫງວນຂອງຕົນໄດ້ ເປັນຕົ້ນແມ່ນມາດຕາ **8** ຂໍ້ **1a** ແລະ **b**ທີ່ໄດ້ກຳນົດວ່າ:

**a).** ຈະບໍ່ນຳໃຊ້ສົນທິສັນຍາສະບັບນີ້ກັບການແກ້ໄຂຂໍ້ຂັດແຍ່ງຊຶ່ງລັດເອງຫຼືອົງການຂອງລັດຖະບານຫຼືບຸກຄົນທີ່ເປັນຕົວແທນຂອງລັດຖະບານເປັນຄູ່ກໍລະນີ;

**b).** ຈະນຳໃຊ້ສົນທິສັນຍາສະບັບນີ້ສະເພາະ ຕໍ່ຄູ່ກໍລະນີທີ່ຕົກລົງກັນວ່າ ຈະນຳໃຊ້ສົນທິສັນຍາສະບັບນີ້ເພື່ອແກ້ໄຂຂໍ້ຂັດແຍ່ງຂອງເຂົາເຈົ້າເທົ່ານັ້ນ.ນອກຈາກ ສອງຂໍ້ສະຫງວນດັ່ງກ່າວ ແມ່ນທຸກຢ່າງປະຕິບັດຕາມເນື້ອໃນຂອງສົນທິສັນຍາທີ່ກຳໄວ້.

**5)ຜົນສັກສິດ ຫຼື ຜົນບັງຄັບປະຕິບັດ**

- ສົນທິສັນຍາສະບັບນີ້ຈະມີຜົນສັກສິດໃຊ້ໄດ້ 6 ເດືອນ ຫຼັງການຍື່ນສານໃຫ້ສັດຕະຍະບັນສະບັບທີສາມ;
- ສົນທິສັນຍາສະບັບນີ້ຈະມີຜົນບັງຄັບປະຕິບັດຕໍ່ປະເທດພາຄີ6 ເດືອນ ຫຼັງຈາກຍື່ນສານໃຫ້ສັດຕະຍະບັນ.

**6) ການຖອນຕົວຂອງຈາກສົນທິສັນຍາ**

ແຕ່ລະປະເທດພາຄີ ສາມາດຖອນຕົວຂອງຈາກສົນທິສັນຍາສະບັບນີ້ໄດ້ທຸກເວລາ ແລະ ການຖອນຕົວ ຈະມີຜົນສັກສິດພາຍໃນ 12 ເດືອນ ຫຼັງຈາກໄດ້ຍື່ນສານຂໍຖອນຕົວ.

**5.3. ນະໂຍບາຍຕໍ່ວຽກງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຖືວ່າເປັນວຽກງານໜຶ່ງທີ່ສຳຄັນ ຂອງຂະບວນການຍຸຕິທຳ ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ກໍຄືການແກ້ໄຂຂໍ້ຂັດແຍ່ງທາງດ້ານສິດຜົນປະໂຫຍດຂອງຄູ່ກໍລະນີເຮັດໃຫ້ຂໍ້ຂັດແຍ່ງໄດ້ຮັບການແກ້ໄຂໂດຍສັນຕິວິທີ ຫຼຸດຜ່ອນຂໍ້ຂັດແຍ່ງທີ່ນຳໄປແກ້ໄຂຢູ່ສານ, ພັກ ແລະ ລັດຖະບານເຫັນໄດ້ຄວາມສຳຄັນຄືດັ່ງກ່າວ ຈຶ່ງໄດ້ວາງແນວທາງນະໂຍບາຍ, ກົດໝາຍ ແລະ ລະບຽບການຕ່າງໆ ທີ່ກ່ຽວຂ້ອງ ເພື່ອເປັນບ່ອນອີງ ແລະ ເພື່ອອຳນວຍຄວາມສະດວກ ໃນການເຄື່ອນໄຫວ ແລະ ຈັດຕັ້ງປະຕິບັດວຽກງານດັ່ງກ່າວໃຫ້ໄດ້ຮັບຜົນດີ.

ເພື່ອຍົກສູງຄຸນນະພາບຂອງວຽກງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດໃຫ້ນັບມື້ນັບສູງຂຶ້ນ ລັດໄດ້ໃນການພັດທະນາບຸກຄະລາກອນ ໃນຂົງເຂດຍຸຕິທຳເວົ້າລວມ, ການສ້າງບຸກຄະລາກອນໃນຂົງເຂດວຽກງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດເວົ້າສະເພາະ ໂດຍລັດໄດ້ມອບໃຫ້ກະຊວງຍຸຕິທຳເປັນເຈົ້າການ. ໃນນີ້ກະຊວງຍຸຕິໄດ້ເອົາໃຈໃສ່ຝຶກອົບຮົມດ້ານວິຊາການ, ວິຊາສະເພາະໃຫ້ບຸກຄະລາກອນວິຊາການເປັນປະຈຳຕິດພັນກັບການເຄື່ອນໄຫວຖອດຖອນບົດຮຽນຈາກອົງການໄກ່ເກ່ຍເສດຖະກິດຂອງພາກພື້ນ ແລະ ສາກົນ.

**5.3.1.ນະໂຍບາຍພາຍໃນຕໍ່ວຽກງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

**+ ການສົ່ງເສີມ ແລະ ການສ້າງເງື່ອນໄຂຂອງລັດ ຕໍ່ວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ແຜນພັດທະນາວຽກງານຂະແໜງຍຸຕິທຳ ຕໍ່ກອງປະຊຸມໃຫຍ່ຄັ້ງທີ IV ຂອງອົງຄະນະພັກກະຊວງຍຸຕິທຳ ໄດ້ກຳນົດຍຸດທະສາດຮອດປີ 2025 ກ່ຽວກັບວຽກງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດໄວ້ໃນພາກທີIII, ຂໍ້ທີ4ວ່າ: ປັບປຸງກົງຈັກການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກຂອງອົງການຊ່ວຍໜູນຍຸຕິທຳ ເປັນຕົ້ນແມ່ນສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດໃຫ້ໜັກແໜ້ນ ແລະ ເຂັ້ມແຂງໃນທຸກດ້ານເພື່ອຫັນເປັນຫົວໜ່ວຍບໍລິຫານວິຊາການທີ່ສາມາດກຸ້ມຕົນເອງດ້ານງົບປະມານເທື່ອລະກ້າວ.

ເພື່ອເປັນການສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດໃຫ້ແກ່ພະນັກງານທີ່ເຮັດວຽກກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ລັດຖະບານ ກໍຄືອົງການຄຸ້ມຄອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດໄດ້ກຳນົດແຜນຍຸດທະສາດໃນການພັດທະນາຂະແໜງຍຸຕິທຳ ໂດຍສະເພາະແມ່ນການປັບປຸງກົງຈັກການຈັດຕັ້ງ ຂອງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດເປັນແຕ່ລະໄລຍະເພື່ອໃຫ້ແທດເໝາະກັບສະພາບການຕົວຈິງ. ການປັບປຸງກົງຈັກການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກຂອງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນໄດ້ສະແດງອອກໃນການປັບປຸງພາລະບົດບາດຂອງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດໃນແຕ່ລະໄລຍະເພື່ອໃຫ້ສອດຄ່ອງກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ.

**+ ການຄຸ້ມຄອງ ແລະ ການກວດກາວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

**ກ. ການຄຸ້ມຄອງວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ອົງການຄຸ້ມຄອງວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ປະກອບດ້ວຍ ກະຊວງຍຸຕິທຳ ແລະ ພະແນກຍຸຕິທຳແຂວງ, ນະຄອນຫຼວງ.

**1) ກະຊວງຍຸຕິທຳ**

ການຄຸ້ມຄອງວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດກະຊວງຍຸຕິທຳມີສິດແລະໜ້າທີ່ດັ່ງນີ້:

- ຄົ້ນຄວ້ານະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານສດຖະກິດ ເພື່ອສະເໜີລັດຖະບານພິຈາລະນາ;

- ຜັນຂະຫຍາຍນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດເປັນແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;

- ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດລວມທັງລະບຽບການ ກ່ຽວກັບການສ້າງຕັ້ງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເອກະຊົນ ແລະ ສະເພາະກິດ;

- ຊີ້ນຳແລະຄຸ້ມຄອງດ້ານການຈັດຕັ້ງຂອງສູນແລະຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

-ຊີ້ນຳ,ຕິດຕາມການເຄື່ອນໄຫວວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດໃນຂອບເຂດທົ່ວປະເທດ;

- ສ້າງ, ບຳລຸງ ແລະ ຍົກລະດັບຄວາມຮູ້ຄວາມສາມາດ, ຈັນຍາບັນ ແລະ ວິຊາສະເພາະ ໃຫ້ພະນັກງານຂອງສູນ ແລະ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ;

- ສະເໜີນາຍົກລັດຖະມົນຕີແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

- ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງຫົວໜ້າສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

-ມີຄຳເຫັນກ່ຽວກັບການແຕ່ງຕັ້ງຫົວໜ້າແລະຮອງຫົວໜ້າຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຕາມການສະເໜີຂອງອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;

-ແຕ່ງຕັ້ງຫຼືປົດຜູ້ໄກ່ເກ່ຍຫຼືຜູ້ຕັດສິນເຂົ້າໃນຫຼືອອກຈາກບັນຊີລາຍຊື່ຜູ້ໄກ່ເກ່ຍຫຼືບັນຊີລາຍຊື່ຜູ້ຕັດສິນຕາມການສະເໜີຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

- ຄົ້ນຄວ້າ, ສະເໜີສ້າງຕັ້ງ ແລະ ຍຸບເລີກອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ແລະ ສະເພາະກິດ;

- ອະນຸຍາດການເຂົ້າມາເຄື່ອນໄຫວຂອງຜູ້ໄກ່ເກ່ຍຫຼືຜູ້ຕັດສິນຕ່າງປະເທດຢູ່ສປປລາວຕາມການສະເໜີຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

- ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການຄຸ້ມຄອງວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

- ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

- ສະຫຼຸບ, ປະເມີນຜົນ ແລະ ລາຍງານການເຄື່ອນໄຫວວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃຫ້ລັດຖະບານຢ່າງເປັນປົກກະຕິ;

- ນຳໃຊ້ສິດແລະປະຕິບັດໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**2) ພະແນກຍຸຕິທຳແຂວງ, ນະຄອນຫຼວງ**

ພະແນກຍຸຕິທຳ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

- ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ແຜນການ, ແຜນງານ ແລະ ໂຄງການກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

- ໂຄສະນາ, ເຜີຍແຜ່, ສຶກສາອົບຮົມກົດໝາຍ ແລະ ລະບຽບການກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

-ຊີ້ນຳແລະຄຸ້ມຄອງດ້ານການຈັດຕັ້ງແລະງົບປະມານຂອງຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

- ຊີ້ນຳ, ຕິດຕາມ ການເຄື່ອນໄຫວວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

- ສະເໜີກະຊວງຍຸຕິທຳມີຄວາມເຫັນກ່ຽວກັບການສ້າງຕັ້ງ ແລະ ປັບປຸງຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

- ຮັບ, ຄົ້ນຄວ້າ ແລະ ແກ້ໄຂຄຳຮ້ອງຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງກ່ຽວກັບການເຄື່ອນໄຫວວຽກງານຂອງຜູ້ໄກ່ເກ່ຍ, ຜູ້ຕັດສິນ ຫຼື ພະນັກງານຂອງຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

- ສະຫຼຸບ, ປະເມີນຜົນ ແລະ ລາຍງານການເຄື່ອນໄຫວວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຕໍ່ກະຊວງຍຸຕິທຳ ແລະ ອົງການປົກຄອງແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;

- ນຳໃຊ້ສິດແລະປະຕິບັດໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ຂ. ອົງການກວດກາວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ອົງການກວດກາວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ປະກອບດ້ວຍ:

**1) ອົງການກວດກາພາຍໃນ**ແມ່ນອົງການດຽວກັນກັບອົງການຄຸ້ມຄອງວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດປະກອບດ້ວຍ[4]: ກະຊວງຍຸຕິທຳ ແລະ ພະແນກຍຸຕິທຳແຂວງ, ນະຄອນຫຼວງ;

ອົງການກວດກາພາຍໃນ ແມ່ນອົງການກວດກາຕາມສາຍຕັ້ງຂອງຂະແໜງການຍຸຕິທຳ ໃນນີ້ຂັ້ນສູນກາງແມ່ນກົມກວດກາຂອງກະຊວງຍຸຕິທຳ ແລະ ຂັ້ນທ້ອງຖິ່ນ ແມ່ນພະແນກຍຸຕິທຳແຂວງ, ນະຄອນຫຼວງຊຶ່ງຕ້ອງໄດ້ດຳເນີນຕາມແຜນການປົກກະຕິ, ການກວດກາຕາມຄຳສັ່ງ ຫຼື ຄຳສະເໜີ ແລະ ແບບກະທັນຫັນ. ເນື້ອໃນ ແລະ ເປົ້າໝາຍຂອງການກວດກາພາຍໃນແມ່ນແນໃສ່ກວດກາການຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ, ແຜນການ, ສິດ ແລະ ໜ້າທີ່ ຄວາມຮັບຜິດຊອບໃນການຄຸ້ມຄອງບໍລິຫານວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແບບບໍລິຫານການປົກຄອງ ແລະ ລະບຽບການດ້ານວິຊາສະເພາະ, ເຕັກນິກ, ຫຼັກການຄຸ້ມຄອງຕາມຂະແໜງການຍຸຕິທຳ.

ການກວດກາພາຍໃນຕໍ່ວຽກງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຍັງແມ່ນການດຳເນີນການກວດກາພາຍໃນຂະແໜງຍຸຕິທຳຕາມສາຍຕັ້ງຂອງການຈັດຕັ້ງ ເພື່ອຕິດຕາມການຈັດຕັ້ງປະຕິບັດວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງ ສກສ ແລະ ຫກສ ເພື່ອຊອກໃຫ້ເຫັນພື້ນຖານຂອງຄວາມຫຍຸ້ງຍາກ, ຂໍ້ຄົງຄ້າງ ແລະ ອື່ນໆ ກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອຄົ້ນຄວ້າສະເໜີວິທີທາງອອກ, ການປັບປຸງກົງໄກການຈັດຕັ້ງ, ສັບຊ້ອນພະນັກງານພາຍໃນ ສກສ ແລະ ຫກສ, ຍົກລະດັບຄວາມສາມາດໃນການບໍລິການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດໃຫ້ສັງຄົມຢ່າງທັນການ, ໂປ່ງໃສ ແລະ ຫຍັບເຂົ້າສູ່ລະບົບສາກົນເທື່ອລະກ້າວ.

**2)ອົງການກວດກາພາຍນອກ** ແມ່ນອົງການຈັດຕັ້ງຂອງລັດຕາມສາຍຂວາງ ຫຼື ເອີ້ນວ່າ ອົງການທີ່ມີສິດ ແລະ ໜ້າທີ່ຮັບຜິດຊອບວຽກງານກວດກາ ຊຶ່ງຈະດຳເນີນຕາມການສະເໜີຂອງບຸກຄົນ, ການຈັດຕັ້ງໃດໜຶ່ງ ຫຼື ລິເລີ່ມໂດຍອົງການກວດກາພາຍນອກເອງໃນກໍລະນີເຫັນວ່າມີບັນຫາທີ່ບໍ່ຈະແຈ້ງ ແລະ ບໍ່ໂປ່ງໃສ.

ອົງການກວດການພາຍນອກ ປະກອບມີ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດຖະບານ, ອົງການກວດກາລັດແຕ່ລະຂັ້ນ, ອົງການກວດສອບແຫ່ງລັດ ແລະ ອົງການໄອຍະການປະຊາຊົນ.

**ຄ. ເນື້ອໃນຕົ້ນຕໍຂອງການກວດກາ**

ເນື້ອໃນຕົ້ນຕໍ ຂອງການກວດກາວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີດັ່ງນີ້:

- ການຈັດຕັ້ງປະຕິບັດກົດໝາຍແລະລະບຽບການກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
- ຄຳຮ້ອງຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງກ່ຽວກັບການແກ້ໄຂຂໍ້ແຍ່ງທາງດ້ານເສດຖະກິດ;
- ການເຄື່ອນໄຫວຂອງສູນແລະຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
- ການຄຸ້ມຄອງແລະການນຳໃຊ້ລາຍຮັບ-ລາຍຈ່າຍຂອງສູນແລະຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
- ຄວາມຮັບຜິດຊອບ ແລະ ການປະພຶດຂອງພະນັກງານຢູ່ສູນ ແລະ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ຂອງຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ.

ການກວດກາວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດມີສາມຮູບການດັ່ງນີ້:

[4] ມາດຕາ 75 ຂອງກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງ ສປປ ລາວ

- ການກວດກາຕາມລະບົບປົກກະຕິ ແມ່ນການກວດກາຕາມແຜນການຢ່າງເປັນປະຈຳ ແລະ ມີການກຳນົດເວລາອັນແນ່ນອນ;

- ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ;

- ການກວດກາແບບກະທັນຫັນ ແມ່ນການກວດກາໂດຍຮີບດ່ວນຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ການກວດກາວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ.

### 5.3.2.ນະໂຍບາຍພາຍນອກຕໍ່ວຽກງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ໂດຍຍຶດໝັ້ນແນວທາງການຕ່າງປະເທດ "**ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມື ຢ່າງສະເໝີຕົ້ນສະເໝີປາຍ ແລະ ປະຕິບັດນະໂຍບາຍເປີດກວ້າງການພົວພັນຮ່ວມມື ແບບຫຼາຍທິດ, ຫຼາຍຝ່າຍ ແລະ ຫຼາຍຮູບແບບ, ທັງປະຕິບັດທິດນຳ "ເພີ່ມມິດຫຼຸດຜ່ອນສັດຕູ"**.

ກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດລັດສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ດ້ວຍການປະສານງານ, ແລກປ່ຽນບົດຮຽນ, ຍົກລະດັບຄວາມຮູ້, ຄວາມສາມາດໃຫ້ບຸກຄະລາກອນຂອງການຈັດຕັ້ງແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ປະຕິບັດວຽກງານດັ່ງກ່າວໃຫ້ສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນທີ່ ສປປ ລາວ ເປັນພາຄີ.

ສະນັ້ນ ເພື່ອຜັນຂະຫຍາຍ ເນື້ອໃນຈິດໃຈ ຂອງວຽກງານດັ່ງກ່າວ ເຂົ້າສູ່ວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານ

ເສດຖະກິດ ລັດຖະບານຈຶ່ງອະນຸມັດໃຫ້ ສປປ ລາວ ເຂົ້າຮ່ວມເປັນພາຄີສົນທິສັນຍານິວຢອກ 1958 ວ່າດ້ວຍການຮັບຮູ້ ແລະ ການບັງຄັບປະຕິບັດຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ໃນປີ 1997, ເຂົ້າຮ່ວມລົງນາມສົນທິສັນຍາ ສິງກະໂປ ວ່າດ້ວຍການໄກ່ເກ່ຍ ໃນປີ 2019 ແລະ ຍັງໄດ້ເຊັນສັນຍາຮ່ວມມືສອງຝ່າຍ ການຊ່ວຍເຫຼືອແພ່ງ, ອາຍາ (ຈີນ, ຫວຽດ, ໄທ, ເກົາຫຼີເໜືອ, ອັງກິດ, ຣັດເຊຍ).

ຕໍ່ກັບວຽກງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ລັດຍັງອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຂໍ້ຂັດແຍ່ງທາງດ້ານເສດຖະກິດ ນຳເອົາຂໍ້ຂັດແຍ່ງຂອງຕົນ ໄປແກ້ໄຂຢູ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງຕ່າງປະເທດໄດ້ ໂດຍ ສປປ ລາວ ຮັບຮູ້ຄຳຕັດສິນຂອງອົງການແກ້ໄຂຂໍ້ຂັດແຍ່ງຂອງຕ່າງ ປະເທດ ແລະ ນຳເອົາຜົນຂອງການແກ້ໄຂມາຈັດຕັ້ງປະຕິບັດຢູ່ ສປປ ລາວ.

ນອກຈາກນັ້ນ ລັດຍັງໄດ້ສົ່ງເສີມກ່ຽວກັບການເຂົ້າຮ່ວມເປັນຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນຂອງຄົນຕ່າງປະເທດ ໂດຍການກຳນົດກ່ຽວກັບມາດຖານ ແລະ ເງື່ອນໄຂຂອງຄະນະກຳມະການທີ່ເປັນຄົນຕ່າງປະເທດ ໄວ້ໃນກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພ້ອມທັງສົ່ງເສີມໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາກລັດ ແລະ ເອກະຊົນເຂົ້າຮ່ວມພັດທະນາວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໂດຍການສະເໜີສ້າງຕັ້ງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ແລະ ສະເພາະກິດຂຶ້ນ ຊຶ່ງລັດເປັນຜູ້ຄຸ້ມຄອງ ແລະ ກຳນົດລະບຽບການສ້າງຕັ້ງ ເພື່ອເປັນບ່ອນອີງໃນການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດດັ່ງກ່າວ.

**References:**

1. ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງ ສປປ ລາວ, ສະບັບເລກທີ 52/ສພຊ, ລົງວັນທີ 22/6/2018.
2. ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2012.

3. ດຳລັດຂອງປະທານສະພາລັດຖະມົນຕີ ສະບັບເລກທີ່146/ສປລ,ລົງວັນທີ 28 ທັນວາ 1989 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງເສດຖະກິດ, ແຜນການ ແລະ ການເງິນ.
4. ອອກດຳລັດຂອງນາຍົກລັດຖະມົນຕີ, ສະບັບເລກທີ່106/ນຍ, ລົງວັນທີ15 ກໍລະກົດ 1994.
5. ສົນທິ ສັນຍາ ນິວຢອກ 1958 ວ່າດ້ວຍການຮັບຮູ້ ແລະ ການບັງຄັບປະຕິບັດຄຳຕັດສິນຂອງຄະນະ ກຳມະການຕ່າງປະເທດ ແລະ ສົນທິສັນຍາສິງກະໂປ 2019 ວ່າດ້ວຍການໄກ່ເກ່ຍ.
6. ປື້ມຄູ່ມືການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ປີ 2017.